# ຂໍ້ກຳນົດ ແລະ ເງື່ອນໄຂ
# ການອອກບັດ ແລະ ການນຳໃຊ້ບັດຊຳລະສ່ວນບຸກຄົນ
# ຂອງ ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ

*(ປະກາດນຳໃຊ້ຕາມຂໍ້ຕົກລົງເລກທີ……./2023/QĐ-P.KD ລົງວັນທີ …./…../2023 ຂອງຜູ້ອຳນວຍການໃຫຍ່ ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ).*

## 1. ຂໍ້ກຳນົດລວມ:

ເນື້ອໃນຂອງບັນດາຂໍ້ກຳນົດ ແລະ ເງື່ອນໄຂຂ້າງລຸ່ມນີ້ ພ້ອມດ້ວຍແບບຟອມລົງທະບຽນນຳໃຊ້ບໍລິການ ລວມເຂົ້າກັນເປັນສັນຍານຳໃຊ້ບັດລະຫວ່າງ ຊາຄອມແບັງ ລາວ ແລະ ເຈົ້າຂອງບັດ (ເອີ້ນຫຍໍ້ວ່າສັນຍາ). ການຕົກລົງເຫັນດີຕາມເນື້ອໃນສັນຍາ, ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນ ໃນແບບຟອມລົງທະບຽນນຳໃຊ້ບໍລິການ, ເຊິ່ງເຈົ້າຂອງບັດ ແລະ ຊາຄອມແບັງ ລາວ ຕ້ອງມີໜ້າທີ່ ແລະ ພັນທະໃນການປະຕິບັດຕາມບັນດາຂໍ້ກຳນົດ, ເງື່ອນໄຂຂອງການອອກບັດ ແລະ ນຳໃຊ້ບັດຊຳລະສ່ວນບຸກຄົນຂອງ ຊາຄອມແບັງ ລາວ. ເຈົ້າຂອງບັດໃຫ້ຄຳໝັ້ນສັນຍາວ່າໄດ້ອ່ານ, ເຂົ້າໃຈ ແລະ ເຫັນດີກັບຂໍ້ກຳນົດ ແລະ ເງື່ອນໄຂເຫຼົ່ານີ້, ສັນຍາວ່າຈະປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂດັ່ງກ່າວ ພ້ອມທັງຂໍ້ຕົກລົງອື່ນໆທີ່ກ່ຽວຂ້ອງກັບ ຊາຄອມແບັງ ລາວ.

## 2. ອະທິບາຍຄຳສັບ:

2.1. "ຊາຄອມແບັງ ລາວ" ແມ່ນ: ທະນາຄານ ໄຊງ່ອນເທືອງຕິ່ນ ລາວ ຈຳກັດຜູ້ດຽວ.

2.2. "**ບັດ**" ແມ່ນ: ບັດຊຳລະ (ຫຼື ເອີ້ນອີກຊື່ໜຶ່ງວ່າ: ບັດຈິດໜີ້) ໂດຍ ຊາຄອມແບັງ ລາວ ເປັນຜູ້ອອກໃຫ້ເຈົ້າຂອງບັດ, ອະນຸຍາດໃຫ້ເຈົ້າຂອງບັດດຳເນີນບັນດາທຸລະກຳຂອງບັດ ຕາມຂອບເຂດຈຳນວນເງິນໃນບັນຊີຂອງເຈົ້າຂອງບັດຫຼັກທີ່ເປີດຢູ່ ຊາຄອມແບັງ ລາວ.

2.3. "**ເຈົ້າຂອງບັດ**" ລວມມີ: ເຈົ້າຂອງບັດຫຼັກ ແລະ ເຈົ້າຂອງບັດເສີມ.

2.4. "**ເຈົ້າຂອງບັດຫຼັກ**" ແມ່ນ: ບຸກຄົນທີ່ລົງລາຍເຊັນໃນຟອມລົງທະບຽນບໍລິການ, ເຊິ່ງໄດ້ ຮັບການອະນຸມັດຈາກ ຊາຄອມແບັງ ລາວ ໃນການອອກບັດ ແລະ ອອກຊື່ໃນບັນຊີບັດທີ່ ຊາຄອມແບັງ ລາວ ແລະ ເຈົ້າຂອງບັດມີພັນທະຮັບຜິດຊອບທາງກົດໝາຍ ຕໍ່ກັບທຸກທຸລະກຳຂອງບັດ, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບບັດ (ລວມທັງການນຳໃຊ້ບັດຂອງເຈົ້າຂອງບັດເສີມ).

2.5. "**ເຈົ້າຂອງບັດເສີມ**" ແມ່ນ: ບຸກຄົນທີ່ໄດ້ຮັບການເຫັນດີໃຫ້ນຳໃຊ້ບັດຈາກເຈົ້າຂອງບັດຫຼັກ ແລະ ເຈົ້າຂອງບັດຫຼັກໄດ້ຢັ້ງຢືນເປັນລາຍລັກອັກສອນໃນການປະຕິບັດພັນທະທັງໝົດທີ່ ເກີດຂຶ້ນໃນການນຳໃຊ້ບັດຕາມສັນຍາ.

2.6. "**ຟອມລົງທະບຽນນຳໃຊ້ບໍລິການ**" ແມ່ນ: ແບບຟອມທີ່ອອກໂດຍ ຊາຄອມແບັງ ລາວ ທີ່ເຈົ້າຂອງບັດຫຼັກລົງລາຍເຊັນເພື່ອສະເໜີໃຫ້ ຊາຄອມແບັງ ລາວ ພິຈາລະນາອອກ ບັດໃຫ້.

2.7. "**ຕູ້ ATM**" ແມ່ນ: ອຸປະກອນທີ່ເຈົ້າຂອງບັດສາມາດນຳໃຊ້ເພື່ອດຳເນີນບັນດາທຸລະກຳ ຄື: ຝາກ, ຖອນເງິນສົດ, ໂອນເງິນ, ຊຳລະໃບບິນສິນຄ້າ, ບໍລິການ, ກວດສອບບັນຊີ, ປ່ຽນລະຫັດ, ກວດສອບຂໍ້ມູນບັດ ຫຼື ບັນດາ ທຸລະກຳອື່ນ.

2.8. "**ເລກບັດ**" ແມ່ນ: ແຖວຕົວເລກພິມຢູ່ດ້ານໜ້າຂອງບັດລວມມີ 16 ຕົວເລກ, ເຈົ້າຂອງບັດໃຊ້ເລກບັດເພື່ອດຳເນີນບັນດາທຸລະກຳທີ່ກ່ຽວຂ້ອງກັບຄຸນນະສົມບັດຂອງບັດຊຳລະ.

2.9. "**ບັນຊີບັດ ຫຼື ເລກບັນຊີບັດ**" ແມ່ນ: ແຖວຕົວເລກພິມຢູ່ດ້ານໜ້າຂອງບັດ ຫຼື ໃນເຈ້ຍຈົດໝາຍຕິດຂັດບັດລວມມີ 12 ຕົວເລກ. ເລກບັນຊີບັດແມ່ນເລກບັນຊີເງິນຝາກກະແສລາຍວັນ/ບັນຊີເງິນຝາກປະຢັດຂອງເຈົ້າຂອງບັດຫຼັກທີ່ເປີດຢູ່ ຊາຄອມແບັງ ລາວ.

2.10. "**ທຸລະກຳບັດ**" ແມ່ນ: ທຸກການຊຳລະຕ່າງໆທີ່ໄດ້ເຮັດ ຫຼື ຈຳນວນເງິນຕ່າງໆທີ່ຕ້ອງຊຳລະຄ່າສິນຄ້າ, ບໍລິການ, ຝາກ, ຖອນເງິນສົດ, ໂອນເງິນ ແລະ/ຫຼື ການກະທຳຕ່າງໆ ທີ່ນຳໃຊ້ບັດທີ່ຕູ້ ATM, ຝ່າຍຮັບຊຳລະດ້ວຍບັດພ້ອມດ້ວຍ PIN ແລະ/ຫລື OTP ແລະ/ຫຼື ລາຍເຊັນ ຫລື ວິທີການອື່ນ.

2.11. "**ທຸລະກຳຊຳລະ Online**" ແມ່ນ: ການນຳໃຊ້ບັດເພື່ອຊຳລະຄ່າສິນຄ້າ, ບໍລິການທາງ Online ໃນບັນດາ Website ຂອງຝ່າຍຮັບຊຳລະດ້ວຍບັດ.

2.12. "**ຝ່າຍຮັບຊຳລະດ້ວຍບັດ**" ແມ່ນ: ອົງການຈັດຕັ້ງ ຫຼື ສ່ວນບຸກຄົນຕ່າງໆ ທີ່ຮັບຊຳລະຄ່າສິນຄ້າ, ບໍລິການດ້ວຍບັດຕາມສັນຍາຊຳລະດ້ວຍບັດ ທີ່ໄດ້ເຊັນນຳອົງການຈັດຕັ້ງຊຳລະດ້ວຍບັດ.

2.13. "**ລະຫັດຢັ້ງຢືນເຈົ້າຂອງບັດ - PIN**" ແມ່ນ: ລະຫັດທີ່ ຊາຄອມແບັງ ລາວ ອອກ ໃຫ້ແກ່ເຈົ້າຂອງບັດໃນເທື່ອທຳອິດ ແລະ ຫລັງຈາກນັ້ນເຈົ້າຂອງບັດສາມາດປ່ຽນລະຫັດຕາມຂັ້ນຕອນແນະນຳທີ່ໄດ້ລະບຸໄວ້.

2.14. "**OTP**" (ລະຫັດລັບນຳໃຊ້ເທື່ອດຽວ) ແມ່ນ: ລະຫັດສາມາດນຳໃຊ້ພຽງຄັ້ງດຽວ ແລະ ມີກຳນົດນຳໃຊ້ໃນໄລຍະເວລາໃດໜຶ່ງ ແລະ ໄດ້ຖືກນຳໃຊ້ຄືກັບອົງປະກອບທີສອງເພື່ອຢັ້ງຢືນຄືນໃຊ້ເຂົ້າໃນແອັບພິເຄຊັນ (Application) ຫຼື ດຳເນີນທຸລະກຳຜ່ານ Internet Banking.

2.15. "**ເຄື່ອງຮູດບັດໃນບັນດາຮ້ານຄ້າ, ຈຸດບໍລິການ - POS/mPOS**" (ຕໍ່ໄປນີ້ເອີ້ນຫຍໍ້ວ່າ "POS") ແມ່ນ: ບັນດາອຸປະກອນຮູດບັດ, ອຸປະກອນສັນຍານທີ່ໄດ້ຕິດຕັ້ງ ແລະ ນຳໃຊ້ຢູ່ບັນດາຮ້ານຄ້າ, ຈຸດບໍລິການທີ່ຮັບຊຳລະດ້ວຍບັດເຊິ່ງເຈົ້າຂອງບັດສາມາດນຳໃຊ້ບັດເພື່ອຊຳລະຄ່າສິນຄ້າ, ບໍລິການ.

2.16. "**ວົງເງິນນຳໃຊ້ບັດ**" ແມ່ນ: ຈຳນວນເງິນສູງສຸດຂອງບັດທີ່ເຈົ້າຂອງບັດສາມາດນຳໃຊ້ເພື່ອຖອນເງິນສົດ ແລະ/ຫຼື ຊຳລະສິນຄ້າ, ບໍລິການຕໍ່ມື້ ແລະ/ຫຼື ບັນດາວົງເງິນອື່ນໃນການນຳໃຊ້ບັດ.

## 3. ຄຸ້ມຄອງບັດ - PIN – OTP:

3.1. ບໍ່ວ່າໃນເວລາໃດກໍຕາມ, ບັດ ແມ່ນຊັບສິນທີ່ເປັນກຳມະສິດຂອງ ຊາຄອມແບັງ ລາວ. ເຈົ້າຂອງບັດບໍ່ມີສິດໂອນບັດໃຫ້ຜູ້ອື່ນ ແລະ ຕ້ອງຮັກສາ, ເກັບມ້ຽນບັດໄວ້.

3.2. ມີພຽງແຕ່ເຈົ້າຂອງບັດທີ່ສາມາດນຳໃຊ້ບັດ,PIN ແລະ/ຫຼື OTP ຂອງຕົນຕາມຄວາມຕ້ອງການເພື່ອດຳເນີນທຸລະກຳບັດ.

3.3. ເຈົ້າຂອງບັດບໍ່ມີສິດນຳໃຊ້ບັດ ຫຼື ອະນຸຍາດໃຫ້ບຸກຄົນອື່ນນຳໃຊ້ບັດ ແລະ ຕ້ອງສົ່ງບັດດັ່ງ ກ່າວຄືນໃຫ້ກັບ ຊາຄອມແບັງ ລາວ ໃນທັນທີທີ່ເກີດເຫດການດັ່ງຕໍ່ໄປນີ້:

a. ບັດຖືກປ່ຽນແທນ, ເປ່ເພ.

b. ບັດຖືກຢຸດຕິການນຳໃຊ້, ຍົກເລີກ ຫຼື ລະງັບການນຳໃຊ້ຕາມລະບຽບຂໍ້ກຳນົດ ແລະ ເງື່ອນໄຂສະບັບນີ້.

c. ບັດຖືກແຈ້ງເສຍ, ຫຼົງລືມ ແຕ່ຫຼັງຈາກນັ້ນເຈົ້າຂອງບັດພົບເຫັນຄືນ.

d. ບັດໝົດອາຍຸການນຳໃຊ້ (ຖ້າມີ) ທີ່ລະບຸໄວ້ເທິງບັດ.

e. ບັດຖືກສວຍໃຊ້ ຫຼື ຂໍ້ມູນຮົ່ວໄຫຼ.

ທຸກທຸລະກຳທີ່ນຳໃຊ້ບັດ ຫຼັງຈາກທີ່ເກີດເຫດການດັ່ງກ່າວຈະຖືວ່າຜິດກົດໝາຍ ແລະ ເຈົ້າຂອງບັດຈະຕ້ອງໄດ້ຊົດໃຊ້ຄືນໃຫ້ແກ່ ຊາຄອມແບັງ ລາວ ທຸກຄວາມເສຍຫາຍ, ຄວາມສູນເສຍທີ່ເກີດຂຶ້ນກັບ ຊາຄອມແບັງ ລາວ ຍ້ອນເຈົ້າຂອງບັດບໍ່ປະຕິບັດຕາມຂໍ້ກຳນົດ.

## 4. ບັນຊີ ແລະ ທຸລະກຳບັດ:

4.1. ເຈົ້າຂອງບັດເຫັນດີມອບສິດໂດຍບໍ່ມີເງື່ອນໄຂໃຫ້ ຊາຄອມແບັງ ລາວ ມີສິດໃນການບັນທຶກໜີ້, ການຫັກລົບ, ອາຍັດ, ລະງັບບັນຊີບັດຊົ່ວຄາວ ຫຼື ບັນຊີໃດກໍຕາມຂອງເຈົ້າຂອງບັດທີ່ເປີດກັບ ຊາຄອມແບັງ ລາວ (ຖ້າຍອດເງິນຄົງເຫຼືອໃນບັນຊີບັດບໍ່ພຽງພໍເພື່ອຊຳລະບັນດາພັນທະຂອງເຈົ້າຂອງບັດກັບ ຊາຄອມແບັງ ລາວ) ໂດຍບໍ່ຕ້ອງແຈ້ງກ່ອນ, ຮຽກຮ້ອງ, ຢັ້ງຢືນ ແລະ ເຫັນດີຈາກເຈົ້າຂອງບັດເພື່ອເກັບຄືນໜີ້ທັງໝົດທີ່ຮອດກຳນົດທີ່ເຈົ້າຂອງບັດຕ້ອງຊຳລະຕາມສັນຍາເຊິ່ງລວມທັງການບໍລິການທີ່ສົ່ງຜົນໃຫ້ເກີນຍອດ ຫຼື ບັນຊີຕິດລົບ, ບັດຈະຖືກຢຸດຕິການນຳໃຊ້ ແລະ/ຫຼື ບັນຊີຖືກປິດ.

4.2. ຖ້າເຈົ້າຂອງບັດນຳໃຊ້ບັດ, PIN ແລະ/ຫຼື OTP ເພື່ອປະຕິບັດການລົງທະບຽນບຸລິມະສິດຄວາມສຳຄັນໃນທຸລະກຳໃດໜຶ່ງກັບຝ່າຍຮັບຊຳລະດ້ວຍບັດ, ແລະ ຫຼັງຈາກນັ້ນບໍ່ນຳໃຊ້ທຸລະກຳຂອງຝ່າຍຮັບຊຳລະດ້ວຍບັດນັ້ນ ເຈົ້າຂອງບັດຕ້ອງຮັບຜິດຊອບຖ້າຝ່າຍຮັບຊຳລະດ້ວຍບັດນັ້ນຄິດໄລ່ຄ່າທຳນຽມໃນການຈອງ ຫຼື ລົງທະບຽນບຸລິມະສິດຄວາມສຳຄັນນັ້ນຕາມຄວາມເໝາະສົມກັບກົດລະບຽບຂອງຝ່າຍຮັບຊຳລະດ້ວຍບັດ.

4.3. ຊາຄອມແບັງ ລາວ ມີສິດບັນທຶກໜີ້ໃນບັນຊີບັດໃຫ້ກັບບັນດາມູນຄ່າຂອງທຸລະກຳທີ່ເກີດຂຶ້ນຈາກການນຳໃຊ້ບັດເຖິງວ່າຈະບໍ່ໄດ້ສິນຄ້າ ຫຼື ບໍລິການເຫຼົ່ານັ້ນບໍ່ໄດ້ມີການມອບ, ເພ ແລະ/ຫຼື ບໍ່ສາມາດນຳໃຊ້ໄດ້ ແລະ ເຈົ້າຂອງບັດຕ້ອງເປັນຜູ້ຮັບຜິດຊອບໃນການຮຽກຮ້ອງ ຫລື ຂັດແຍ່ງນຳຜູ້ໃຫ້ບໍລິການ ATM ຫລື ຝ່າຍຮັບຊຳລະດ້ວຍບັດທີ່ກ່ຽວຂ້ອງກັບບັນຫາດັ່ງກ່າວ.

4.4. ທຸກໆທຸລະກຳ, ຄ່າທຳນຽມ, ຄ່າໃຊ້ຈ່າຍທີ່ຊຳລະດ້ວຍສະກຸນເງິນອື່ນທີ່ຕ່າງຈາກສະກຸນເງິນໃນບັນຊີບັດຈະຖືກແລກປ່ຽນມາເປັນສະກຸນເງິນໃນບັນຊີບັດນັ້ນທັນທີທີ່ມີການນຳໃຊ້ໂດຍອັດຕະໂນມັດ ແລະ ການນຳໃຊ້ຄ່າທຳນຽມແມ່ນຕາມ ຊາຄອມແບັງ ລາວ ເປັນຜູ້ກຳນົດ ແລະ ຄິດໄລ່ເຂົ້າໃນບັນຊີບັດ.

4.5. ເຈົ້າຂອງບັດຕ້ອງຮັບປະກັນວ່າເງິນໃນບັນຊີບັດພຽງພໍເພື່ອຊຳລະ, ການບໍລິການຕ່າງໆ, ຄ່າທຳນຽມ ຫຼື ຄ່າໃຊ້ຈ່າຍ ທີ່ກ່ຽວຂ້ອງກັບບັດ ຕາມແຕ່ລະກໍລະນີໂດຍທີ່ ຊາຄອມແບັງ ລາວ ມີສິດໃນການດຳເນີນການທັນທີ ແລະ ບໍ່ຕ້ອງແຈ້ງກ່ອນ ຫລື ໃຫ້ເຫດຜົນຕໍ່ເຈົ້າຂອງບັດເຊັ່ນ:

a. ອະນຸມັດ, ມອບສິດ ຫຼື ອະນຸຍາດໃຫ້ກັບບັນດາຄ່າບໍລິການ, ຄ່າໃຊ້ຈ່າຍ, ຄ່າທຳນຽມ ທີ່ຕ້ອງຊຳລະເຖິງວ່າເງິນໃນບັນຊີບັດບໍ່ພຽງພໍ; ຫຼື

b. ປະຕິເສດການອະນຸມັດ, ມອບສິດ ແລະ/ຫຼື ອະນຸມັດການດຳເນີນທຸລະກຳຕ່າງໆ, ຄ່າໃຊ້ຈ່າຍ ຫຼື ຄ່າທຳນຽມເຖິງວ່າ ຈະມີເງິນພຽງພໍໃນບັນຊີບັດກໍຕາມ.

4.6. ໃນກໍລະນີດຳເນີນທຸລະກຳບັດໃດໜຶ່ງ, ຄ່າໃຊ້ຈ່າຍ ຫຼື ຄ່າທຳນຽມທີ່ຄາດວ່າຈະເກີດຂຶ້ນ, ຊາຄອມແບັງ ລາວ ສາມາດຮັກສາ ແລະ/ຫຼື ອາຍັດ, ລະງັບເງິນໃນບັນຊີບັດໂດຍມີການຄິດໄລ່ຈຳນວນເງິນຕາມການກຳນົດຂອງ ຊາຄອມແບັງ ລາວ ຕໍ່ກັບຈຳນວນເງິນທີ່ຄາດວ່າລູກຄ້າຈະຕ້ອງຊຳລະໃຫ້ກັບທຸລະກຳນັ້ນໆ. ຈຳນວນເງິນດັ່ງກ່າວອາດຈະຖືກຮັກສາ, ອາຍັດ/ລະງັບຊົ່ວຄາວ ແລະ/ຫລື ປົດອາຍັດ/ລະງັບຊົ່ວຄາວຕາມການຕັດສິນຂອງ ຊາຄອມແບັງ ລາວ ພຽງຝ່າຍດຽວ ແລະ ອາດຈະບໍ່ແມ່ນຈຳນວນເງິນທີ່ຊັດເຈນຂອງບັນດາທຸລະກຳທີ່ລູກຄ້ານຳໃຊ້, ຄ່າໃຊ້ຈ່າຍ ຫຼື ຄ່າທຳນຽມທີ່ໄດ້ບັນທຶກໜີ້ເຂົ້າໃນບັນຊີບັດແມ່ນອີງຕາມອັດຕາແລກປ່ຽນໃນເວລາທີ່ບັນຊີໄດ້ບັນທຶກໜີ້ຢ່າງເປັນທາງການ(ຫັກບັນຊີ).

4.7. ເຈົ້າຂອງບັດບໍ່ໃຫ້ດຳເນີນບາງທຸລະກຳທີ່ ຊາຄອມແບັງ ລາວ ກຳນົດ ແລະ ແຈ້ງການໃນແຕ່ລະໄລຍະ.

4.8. ບັດຖືກລະງັບນຳໃຊ້ຊົ່ວຄາວ, ສິ້ນສຸດການນຳໃຊ້ ຫຼື ໝົດອາຍຸການນຳໃຊ້, ຍົກເລີກ, ຫ້າມນຳໃຊ້ ແມ່ນເຈົ້າຂອງບັດຈະບໍ່ສາມາດດຳເນີນທຸລະກຳບັດໄດ້.

4.9. ບັນດາວົງເງິນຊຳລະ, ວົງເງິນໂອນ, ວົງເງິນຖອນເງິນສົດ ແລະ ບັນດາວົງເງິນອື່ນໃນການນຳໃຊ້ບັດ ຕໍ່ກັບເຈົ້າຂອງບັດຈະປະຕິບັດຕາມຂໍ້ກຳນົດຂອງ ຊາຄອມແບັງ ລາວ ໃນແຕ່ລະໄລຍະ ແລະ ແທດເໝາະກັບລະບຽບກົດຫມາຍ. ຊາຄອມແບັງ ລາວ ຈະແຈ້ງໃຫ້ເຈົ້າຂອງບັດກ່ຽວກັບບັນດາວົງເງິນຕາມຂໍ້ກຳນົດໃນມາດຕາ 14 ຂອງສັນຍາສະບັບນີ້.

## 5. ພັນທະຂອງເຈົ້າຂອງບັດ:

5.1. ເຈົ້າຂອງບັດຕ້ອງລົງລາຍເຊັນເທິງບັດໃນເວລາຮັບບັດ.

5.2. ເຈົ້າຂອງບັດສັນຍາວ່າຈະສະໜອງທຸກເອກະສານນິຕິກຳສ່ວນບຸກຄົນໃຫ້ຄົບຖ້ວນ, ທັນເວລາ, ຖືກຕ້ອງ, ເມື່ອມີການປ່ຽນແປງໃດໆທຽບກັບຂໍ້ມູນທີ່ໄດ້ລົງທະບຽນນຳ ຊາຄອມແບັງ ລາວ ແລະ/ຫຼື ຕາມການຮຽກຮ້ອງຂອງ ຊາຄອມແບັງ ລາວ ເພື່ອນຳໃຊ້ໃນການດຳເນີນທຸລະກຳບັດ, ກວດສອບຂໍ້ມູນ, ແກ້ໄຂຂໍ້ຂັດແຍ່ງ, ຄຳຮຽກຮ້ອງທີ່ກ່ຽວຂ້ອງກັບບັດ.

ການສະໜອງຂໍ້ມູນຈາກເຈົ້າຂອງບັດໃຫ້ ຊາຄອມແບັງ ລາວ ແມ່ນບໍ່ສາມາດນຳໃຊ້ຮູບແບບ E-mail ຫຼື ໂທລະສັບໄດ້. ຊາຄອມແບັງ ລາວ ຈະບໍ່ຮັບຜິດຊອບພັນທະໃດໆໃນກໍລະນີທີ່ເຈົ້າຂອງບັດບໍ່ສະໜອງຂໍ້ ມູນທີ່ຈຳເປັນໃຫ້ຄົບຖ້ວນ, ທັນເວລາ, ຖືກຕ້ອງ ແລະ/ຫຼື ບໍ່ສະແດງບັນດາເອກະສານເພື່ອຢັ້ງຢືນບັນດາຂໍ້ມູນນັ້ນເມື່ອມີການປ່ຽນແປງປຽບທຽບກັບຂໍ້ມູນທີ່ໄດ້ລົງທະບຽນນຳ ຊາຄອມແບັງ ລາວ ແລະ/ຫຼື ຕາມຄວາມຮຽກຮ້ອງຂອງ ຊາຄອມແບັງ ລາວ.

5.3. ເຈົ້າຂອງບັດສັນຍາວ່າຈະບໍ່ດຳເນີນ ຫຼື ອະນຸຍາດໃຫ້ບຸກຄົນອື່ນດຳເນີນທຸລະກຳບັດເຂົ້າໃນຈຸດປະສົງທີ່ຜິດກົດໝາຍ ຫຼື ຂັດກັບຂໍ້ກຳນົດການນຳໃຊ້ບັດ.

5.4. ໃນກໍລະນີເຈົ້າຂອງບັດເຮັດທຸລະກຳເກີນຈຳນວນເງິນຄົງເຫຼືອໃນບັນຊີບໍ່ວ່າດ້ວຍສາເຫດໃດກໍຕາມເຈົ້າຂອງບັດຕ້ອງຊຳລະຈຳນວນເງິນດັ່ງກ່າວໃຫ້ ຊາຄອມແບັງ ລາວ ທັນທີ (ດ້ວຍ ຮູບແບບການມອບເງິນສົດ ຫຼື ໂອນເງິນເຂົ້າບັນຊີ) ຂອງຈຳນວນເງິນທັງໝົດທີ່ໄດ້ນຳໃຊ້ເກີນເຖິງວ່າຈະໄດ້ຮັບການແຈ້ງການ, ຮຽກຮ້ອງ ຫຼື ບໍ່.

ເຈົ້າຂອງບັດຫຼັກສັນຍາວ່າເຈົ້າຂອງບັດເສີມ (ຖ້າມີ) ທີ່ໄດ້ລົງທະບຽນນຳໃຊ້ບັດເສີມໄດ້ ຕອບສະໜອງບັນດາເງື່ອນໄຂນຳໃຊ້ບັດຕາມລະບຽບຂອງ ຊາຄອມແບັງ ລາວ ໃນແຕ່ລະໄລຍະ.

## 6. ສິດ ແລະ ຄວາມຮັບຜິດຊອບຂອງເຈົ້າຂອງບັດ:

6.1. ເຈົ້າຂອງບັດຕ້ອງແຈ້ງເປັນລາຍລັກອັກສອນໃຫ້ ຊາຄອມແບັງ ລາວ ທັນທີ ເມື່ອ:

a. ທຸກການປ່ຽນແປງໃດໆກ່ຽວກັບຂໍ້ມູນຂອງເຈົ້າຂອງບັດ, ລວມເຖິງການປ່ຽນແປງທີ່ຢູ່ ແລະ/ຫຼື ບັນດາລາຍລະອຽດການຕິດຕໍ່ອື່ນໆ; ແລະ/ຫຼື

b. ທຸກຂໍ້ມູນອື່ນໆທີ່ ຊາຄອມແບັງ ລາວ ອາດຈະຮຽກຮ້ອງໃຫ້ປະກອບໃນແຕ່ລະໄລຍະ.

ທຸກຄວາມເສຍຫາຍໃດທີ່ເກີດຂຶ້ນຍ້ອນເຈົ້າຂອງບັດບໍ່ແຈ້ງ, ລົງທະບຽນປ່ຽນແປງຂໍ້ມູນນຳ ຊາຄອມແບັງ ລາວ ແມ່ນເຈົ້າຂອງບັດຕ້ອງຮັບຜິດຊອບເອງ.

6.2. ເຈົ້າຂອງບັດຕ້ອງປະຕິບັດຕາມຂັ້ນຕອນການລົງທະບຽນ, ຕາມລຳດັບໃນການບໍລິການ ແລະ ບັນດາຄຳແນະນຳອື່ນຂອງ ຊາຄອມແບັງ ລາວ.

6.3. ເຈົ້າຂອງບັດຕ້ອງຮັບຜິດຊອບຄວາມເສຍຫາຍທັງໝົດທີ່ເກີດຂຶ້ນ (ຖ້າມີ) ຕໍ່ກັບ:

a. ບັນດາທຸລະກຳບັດທີ່ໄດ້ດຳເນີນຍ້ອນຄວາມຜິດພາດຂອງເຈົ້າຂອງບັດ ຫຼື ຍ້ອນການຖືກສວຍໃຊ້ໂອກາດຂອງບຸກຄົນອື່ນ.

b. ເຈົ້າຂອງບັດເຮັດຂໍ້ມູນຮົ່ວໄຫລ/ເຜີຍແຜ່ລະຫັດ ແລະ/ຫຼື OTP ເຊັ່ນດຽວກັນກັບອົງປະກອບໃນການຢັ້ງຢືນບຸກຄົນ ຫຼື ບັນດາຂໍ້ມູນອື່ນທີ່ກ່ຽວຂ້ອງກັບທຸລະກຳບັດໃຫ້ຝ່າຍທີ 3.

c. ຈຳນວນຍອດຄ້າງໃນບັນຊີຂອງເຈົ້າຂອງບັດບໍ່ພໍໃນການດຳເນີນທຸລະກຳ ແລະ/ຫຼື ຂໍ້ມູນຂອງເຈົ້າຂອງບັດສະໜອງມາບໍ່ຖືກຕ້ອງ, ບໍ່ຄົບຖ້ວນ, ບໍ່ທັນເວລາ.

d. ຊາຄອມແບັງ ລາວ ຈະຢຸດຕິການນຳໃຊ້ບັດຕາມຂໍ້ກຳນົດ ແລະ ເງື່ອນໄຂນີ້.

e. ການມອບສິ່ງ, ຄຸນະພາບ ແລະ/ຫຼື ປະຕິບັດການຊຳລະໃດໆໃຫ້ສິນຄ້າ ຫຼື ບໍລິການໂດຍການນຳໃຊ້ບັດ.

f. ເມື່ອ ຊາຄອມແບັງ ລາວ ດຳເນີນການຕາມຄວາມເຫມາະສົມກັບຄຳສັ່ງຂອງເຈົ້າຂອງບັດ.

6.4. ເຈົ້າຂອງບັດຫຼັກມີສິດຮຽກຮ້ອງປ່ຽນແປງຂໍ້ມູນທັງຫມົດກ່ຽວຂ້ອງກັບບັດ, ເຈົ້າຂອງບັດເສີມມີສິດພຽງໃນການຂໍປ່ຽນແປງຂໍ້ມູນສ່ວນບຸກຄົນຂອງຕົນແຕ່ຕ້ອງໄດ້ຮັບ ການຢັ້ງຢືນຈາກເຈົ້າຂອງບັດຫຼັກ.

ເຈົ້າຂອງບັດຫຼັກມີສິດຮ້ອງຂໍ ຊາຄອມແບັງ ລາວ ສະໜອງຂໍ້ມູນກ່ຽວກັບຍອດຄ້າງໃນບັນຊີ, ປະຫວັດການເຄື່ອນໄຫວທຸລະກຳບັດ ແລະ ບັນດາຂໍ້ມູນທີ່ຈຳເປັນກ່ຽວຂ້ອງກັບບັດ (ລວມບັດຫຼັກ ແລະ ບັດເສີມ). ເຈົ້າຂອງບັດເສີມມີສິດຮ້ອງຂໍ ຊາຄອມແບັງ ລາວ ໃຫ້ຂໍ້ມູນກ່ຽວກັບຍອດຄ້າງໃນບັນຊີ, ປະຫວັດການເຄື່ອນໄຫວທຸລະກຳບັດ ແລະ ບັນດາຂໍ້ມູນທີ່ຈຳເປັນກ່ຽວຂ້ອງກັບບັດເສີມຂອງຕົນ.

6.5. ເຈົ້າຂອງບັດຕ້ອງຮັບຜິດຊອບຕໍ່ຜົນສະທ້ອນ ຫຼື ຄວາມເສຍຫາຍ, ການສູນເສຍຕ່າງໆທີ່ເກີດຂຶ້ນຈາກຄວາມຜິດພາດ ຫຼື ຖືກສວຍໂອກາດ, ຫຼອກລວງ ຍ້ອນຄວາມຜິດພາດຂອງເຈົ້າຂອງບັດທີ່ເກີດຂຶ້ນຈາກການນຳໃຊ້ບັດ ຫຼື ກ່ຽວຂ້ອງກັບການນຳໃຊ້ບັດເພື່ອດຳເນີນທຸລະກຳຖອນເງິນຢູ່ຕູ້ ATM, ລວມທັງການທີ່ເຈົ້າຂອງບັດບໍ່ໄດ້ຮັບ ຫຼື ຮັບບໍ່ຄົບຖ້ວນຕາມຈຳນວນເງິນທີ່ຕູ້ ATM ຈ່າຍ.

6.6. ພັນທະຂອງເຈົ້າຂອງບັດຕໍ່ກັບ ຊາຄອມແບັງ ລາວ ແມ່ນຕ້ອງໄດ້ປະຕິບັດຢ່າງຄົບຖ້ວນ ແລະ ເຂັ້ມງວດ, ທຸກຂໍ້ຂັດແຍ່ງລະຫວ່າງເຈົ້າຂອງບັດຕໍ່ກັບອົງການຈັດຕັ້ງໃດໆ ຫຼື ບຸກຄົນໃດຈະບໍ່ສົ່ງຜົນສະທ້ອນເຖິງບັນດາພັນທະທີ່ກຳລັງເກີດຂຶ້ນຂອງເຈົ້າຂອງບັດຕໍ່ກັບ ຊາຄອມແບັງ ລາວ.

## 7. ສິດ ແລະ ຄວາມຮັບຜິດຊອບຂອງ ຊາຄອມແບັງ ລາວ:

7.1. ບໍ່ວ່າຍາມໃດກໍຕາມ, ຊາຄອມແບັງ ລາວ ມີສິດຜູກຂາດໃນການຕັດສິນໃຈພຽງຝ່າຍດຽວຕະຫຼອດເວລາ ໂດຍບໍ່ຈຳເປັນຕ້ອງແຈ້ງການກ່ອນ ຫຼື ໃຫ້ເຫດຜົນເຖິງເຈົ້າຂອງບັດ, ທະນາຄານມີສິດ:

(i) ເພີ່ມເຕີມ, ປ່ຽນແປງມື້ໝົດກຳນົດ ແລະ/ຫຼື ລາຍລະອຽດອື່ນຂອງບັດທີ່ໄດ້ເປີດ, ປ່ຽນບັດໃໝ່.

(ii) ຮຽກຮ້ອງໃຫ້ເຈົ້າຂອງບັດປ່ຽນລະຫັດບັດໂດຍເຈົ້າຂອງບັດເປັນຜູ້ກຳນົດເອງ.

(iii) ຈຳກັດ, ລະງັບຊົ່ວຄາວ ຫຼື ຢຸດຕິການນຳໃຊ້ບັດ, ບໍ່ວ່າຈະແມ່ນການບໍລິການ, ຜົນປະໂຫຍດ ຫຼື ຂໍ້ສະດວກໃດໆທີ່ກ່ຽວຂ້ອງກັບບັດ ແລະ ທຸລະກຳບັດ.

7.2. ຊາຄອມແບັງ ລາວ ມີສິດ (ແຕ່ບໍ່ມີພັນທະ) ປະຕິບັດມາດຕະການທີ່ຈຳເປັນລວມມີ: ການສະກັດກັ້ນ ແລະ ປະຕິເສດທຸລະກຳຂອງບັດ, ລະງັບບັດຊົ່ວຄາວ ແລະ/ຫຼື ບັນດາມາດຕະການ ອື່ນໃນບັນດາກໍລະນີດັ່ງນີ້:

a) ການດຳເນີນທຸລະກຳບັດໂດຍບໍ່ແມ່ນເຈົ້າຂອງບັດເປັນຜູ້ປະຕິບັດ;

b) ການຮຽກຮ້ອງກ່ຽວກັບການຕໍ່ຕ້ານການຟອກເງິນຕາມລະບຽບກົດໝາຍ;

c) ຈຳນວນເງິນໃນບັນຊີບັດຂອງເຈົ້າຂອງບັດບໍ່ພໍເພື່ອຊຳລະ ຫຼື ກຳລັງຖືກຮຽກຮ້ອງຢູ່ ຊາຄອມແບັງ ລາວ, ການຮຽກຮ້ອງນີ້ຕ້ອງມີເອກະສານທາງນິຕິກຳ;

d) ຕາມຄວາມຮຽກຮ້ອງຂອງອົງການຈັດຕັ້ງລັດທີ່ມີສິດອຳນາດ;

e) ເພື່ອສະກັດກັ້ນຄວາມເສຍຫາຍທີ່ອາດເກີດຂຶ້ນກັບ ຊາຄອມແບັງ ລາວ ແລະ ເຈົ້າຂອງບັດ;

f) ພົບເຫັນການດຳເນີນທຸລະກຳທີ່ມີເນື້ອໃນຂັດກັບລະບຽບກົດໝາຍ ຫຼື ລະບຽບການນຳໃຊ້ບັດ;

g) ເມື່ອ ຊາຄອມແບັງ ລາວ ພົບເຫັນມີການຫຼົງ, ຂໍ້ຜິດພາດໃນການໂອນເງິນ;

h) ເຈົ້າຂອງບັດລະເມີດສັນຍາ, ຂໍ້ຕົກລົງ ຫຼື ສັນຍາໃດທີ່ໄດ້ເຊັນກັບ ຊາຄອມແບັງ ລາວ;

ຊາຄອມແບັງ ລາວ ຈະແຈ້ງໃຫ້ເຈົ້າຂອງບັດທັນທີຫຼັງຈາກປະຕິບັດບັນດາມາດຕະການດັ່ງກ່າວ;

7.3. ຊາຄອມແບັງ ລາວ ຈະບໍ່ຮັບຜິດຊອບຕໍ່ຜົນສະທ້ອນ ຫຼື ຄວາມເສຍຫາຍໃດໆ, ການສູນເສຍໃດໆທີ່ເກີດຈາກ ຫຼືກ່ຽວຂ້ອງກັບການນຳໃຊ້ບັດເພື່ອດຳເນີນການຖອນເງິນໃນຕູ້ ATM ເຊິ່ງລວມເຖິງການທີ່ເຈົ້າຂອງບັດບໍ່ໄດ້ຮັບເງິນ ຫຼື ຮັບເງິນບໍ່ຄົບຖ້ວນຈາກຕູ້ ATM.

7.4. ຊາຄອມແບັງ ລາວ ມີສິດນຳໃຊ້, ເກັບມ້ຽນ, ສະໜອງ ຫຼື ແລກປ່ຽນຂໍ້ມູນຂອງເຈົ້າຂອງບັດ, ທຸລະກຳບັດເພື່ອຈຸດປະສົງໃນການຮັບໃຊ້ສັນຍາ ແລະ ເໝາະສົມກັບລະບຽບກົດໝາຍ.

7.5. ຄວາມຮັບຜິດຊອບຂອງ ຊາຄອມແບັງ ລາວ ໃນການກວດສອບ, ຈັດການກັບຄຳຮຽກຮ້ອງໃນການນຳໃຊ້ບັດ:

a. ເມື່ອປະກົດມີຄວາມຜິດພາດ ຫຼື ສົງໃສວ່າທຸລະກຳເກີດຂໍ້ຜິດພາດ, ເຈົ້າຂອງບັດມີສິດຮຽກຮ້ອງໃຫ້ ຊາຄອມແບັງ ລາວ ກວດສອບ, ຮັບຄຳຮຽກຮ້ອງຂອງຕົນ. ເຈົ້າຂອງບັດຕ້ອງສະໜອງໃບບິນທຸລະກຳ ຫຼື ຂໍ້ມູນທີ່ກ່ຽວຂ້ອງຕ່າງໆທີ່ສາມາດສະແດງເນື້ອໃນຂອງການຮຽກຮ້ອງຕາມຄວາມຕ້ອງການຂອງ ຊາຄອມແບັງ ລາວ. ການກວດສອບຈະໄດ້ດຳເນີນຕາມລະບຽບການຂອງ ຊາຄອມແບັງ ລາວ ໃນຄຳຮຽກຮ້ອງທຸລະກຳ. ຖ້າຜົນການກວດສອບພົບເຫັນວ່າບໍ່ຖືກຕ້ອງຕາມຄຳຮຽກຮ້ອງ, ເຈົ້າຂອງບັດມີໜ້າທີ່ຊຳລະຄ່າທຳນຽມໃນການຮຽກຮ້ອງທີ່ຜິດພາດ.

b. ເຈົ້າຂອງບັດມີສິດສະເໜີກວດສອບ, ຮຽກຮ້ອງໃຫ້ ຊາຄອມແບັງ ລາວ ກວດສອບໃນໄລຍະເວລາ 60 ວັນນັບແຕ່ມື້ດຳເນີນທຸລະກຳ. ໃນກໍລະນີເກີນກຳນົດນີ້, ຖ້າ ຊາຄອມແບັງ ລາວ ບໍ່ໄດ້ຮັບການຮຽກຮ້ອງໃດໆຈາກເຈົ້າຂອງບັດ ບັນດາລາຍຈ່າຍທີ່ໄດ້ຄິດໄລ່ເຂົ້າຍອດໜີ້ບັດຈະຖືວ່າບັນດາທຸລະກຳ, ຄ່າໃຊ້ຈ່າຍ, ຄ່າທຳນຽມ, ຈົດໜີ້ ຫຼື/ແລະ ຈົດມີແມ່ນຖືກຕ້ອງ ແລະ ມີຜົນບັງຄັບໃຊ້ຍົກເວັ້ນກໍລະນີ ຊາຄອມແບັງ ລາວ ຕົກລົງປ່ຽນແປງ ແລະ/ຫຼື ເພີ່ມເຕີມບັນດາລາຍຈ່າຍທີ່ຈົດເຂົ້າຍອດໜີ້ຕາມເວລາກຳນົດຂອງຕົນໃນເວລາໃດກໍຕາມ.

c. ຊາຄອມແບັງ ລາວ ນຳໃຊ້ສອງວິທີໃນການຮັບຂໍ້ມູນກວດສອບ, ຮຽກຮ້ອງຈາກເຈົ້າຂອງບັດລວມມີ: ຜ່ານເບີສູນບໍລິການ (ມີບັນທຶກສຽງ, ບໍລິການ 24/24 ຕໍ່ວັນ, 7/7ວັນ ຕໍ່ອາທິດ) ແລະ ຜ່ານຈຸດບໍລິການຂອງ ຊາຄອມແບັງ ລາວ; ຮັບປະກັນຢັ້ງຢືນວ່າບັນດາຂໍ້ມູນພື້ນຖານທີ່ເຈົ້າຂອງບັດສະໜອງໃຫ້ ຊາຄອມແບັງ ລາວ ແມ່ນຖືກຕ້ອງ.

ຊາຄອມແບັງ ລາວ ຈະດຳເນີນລ໋ອກບັດທັນທີເມື່ອເຈົ້າຂອງບັດເກີດຄວາມສົງໃສວ່າມີການລັກລອບຂໍ້ມູນບັດ ຫຼື ບັດສູນຫາຍ ແລະ ຈະຕ້ອງຮັບຜິດຊອບຕໍ່ກັບຄວາມເສຍຫາຍທັງໝົດຂອງການເງິນທີ່ເກີດຈາກທຸລະກຳບັດຫຼັງຈາກບັດໄດ້ຖືກລ໋ອກໄປແລ້ວ.

ໃນເວລາສະເໜີກວດສອບ, ຮຽກຮ້ອງຢູ່ບັນດາຈຸດບໍລິການຂອງ ຊາຄອມແບັງ ລາວ, ເຈົ້າຂອງບັດນຳໃຊ້ແບບຟອມສະເໜີກວດສອບ, ຮຽກຮ້ອງຂອງ ຊາຄອມແບັງ ລາວ. ໃນກໍລະນີຮັບຂໍ້ມູນຜ່ານເບີສູນບໍລິການ, ເຈົ້າຂອງບັດຕ້ອງປະກອບໃບສະເໜີກວດສອບ, ຮຽກຮ້ອງຕາມແບບຟອມຂອງ ຊາຄອມແບັງ ລາວ ໃນໄລຍະ 05 ວັນເຮັດວຽກນັບແຕ່ມື້ທີ່ເຈົ້າຂອງບັດສະເໜີກວດສອບ, ຮ້ອງຟ້ອງຜ່ານເບີສູນບໍລິການເພື່ອເປັນຫຼັກຖານທາງການໃນການແກ້ໄຂບັນດາໃບສະເໜີກວດສອບ, ຮຽກຮ້ອງ. ກໍລະນີມອບສິດໃຫ້ຜູ້ອື່ນສະເໜີກວດສອບ, ຮຽກຮ້ອງ, ເຈົ້າຂອງບັດຕ້ອງປະຕິບັດຕາມລະບຽບກົດໝາຍໃນການມອບສິດ.

d. ຊາຄອມແບັງ ລາວ ຈະແກ້ໄຂກວດສອບ, ຮຽກຮ້ອງ ແລະ ຈະແຈ້ງຄຳຕອບຂອງການກວດສອບ , ຮຽກຮ້ອງໃຫ້ເຈົ້າຂອງບັດພາຍໃນ 45 ວັນເຮັດວຽກນັບແຕ່ມື້ໄດ້ຮັບການສະເໜີກວດສອບ, ຮຽກຮ້ອງຂອງເຈົ້າຂອງບັດດ້ວຍວິທີການໃດໜຶ່ງທີ່ນອນໃນຂໍ້ C ມາດຕາ 7.5 ຂອງສັນຍາສະບັບນີ້.

e. ຈັດການແກ້ໄຂການກວດສອບ, ຄຳຮຽກຮ້ອງ: ໃນໄລຍະເວລາກຳນົດສູງສຸດ 5 ວັນລັດຖະການນັບແຕ່ມື້ແຈ້ງຜົນການກວດສອບ, ຄຳຮຽກຮ້ອງໃຫ້ເຈົ້າຂອງບັດ ຊາຄອມແບັງ ລາວ ຈະດຳເນີນການທົດແທນໃຫ້ເຈົ້າຂອງບັດອີງຕາມການຕົກລົງ ແລະ ລະບຽບກົດຫມາຍຕໍ່ກັບບັນດາຄວາມເສຍຫາຍທີ່ເກີດຂຶ້ນທີ່ບໍ່ແມ່ນຄວາມຜິດຂອງເຈົ້າຂອງບັດ ແລະ/ຫຼື ບໍ່ແມ່ນບັນດາກໍລະນີສຸດວິໄສທີ່ໄດ້ຕົກລົງໃນສັນຍາ.

ກໍລະນີຄວາມເສຍຫາຍເກີດຂຶ້ນຈາກຄວາມຜິດພາດຂອງບັນດາຝ່າຍທີ່ກ່ຽວຂ້ອງ (ອົງການຊຳລະບັດ, ອົງການ Swithing ບັດ, ອົງການຊຳລະສາກົນ, ຝ່າຍຮັບຊຳລະດ້ວຍບັດ), ຝ່າຍທີ່ຜິດຕ້ອງດຳເນີນການຊົດໃຊ້ໃຫ້ ຊາຄອມແບັງ ລາວ ຕາມຂໍ້ຕົກລົງຂອງແຕ່ລະຝ່າຍ ແລະ ເໝາະສົມກັບລະບຽບກົດໝາຍ; ໃນກໍລະນີກາຍເວລາທີ່ກ່າວໄວ້ຂ້າງເທິງແຕ່ຍັງບໍ່ສາມາດຊອກຫາສາເຫດໄດ້ ຫຼື ຄວາມຜິດເກີດຈາກຝ່າຍໃດພາຍໃນ 15 ວັນເຮັດວຽກຕໍ່ໄປ ຊາຄອມແບັງ ລາວ ຈະຕົກລົງກັບເຈົ້າຂອງບັດເຖິງວິທີການແກ້ໄຂ ຫຼື ຊົດໃຊ້ຄວາມເສຍຫາຍຊົ່ວຄາວໃຫ້ເຈົ້າຂອງບັດຈົນກວ່າຈະມີຜົນສະຫລຸບສຸດທ້າຍຂອງອົງການຈັດຕັ້ງທີ່ມີອຳນາດຕັດສິນຄວາມຜິດ ແລະ ຄວາມຮັບຜິດຊອບຂອງແຕ່ລະຝ່າຍ.

ກໍລະນີສະຖານະການທີ່ມີລັກສະນະອາຊະຍາກຳ, ຊາຄອມແບັງ ລາວ ຈະແຈ້ງການໃຫ້ອົງການຈັດຕັ້ງຂອງລັດທີ່ມີສິດຕາມລະບຽບກົດໝາຍໃນການດຳເນີນຄະດີອາຍາ ແລະ ລາຍງານເຖິງທະນາຄານແຫ່ງ ສ.ປ.ປ ລາວ; ພ້ອມດຽວກັນນັ້ນກໍຈະແຈ້ງການເປັນລາຍລັກອັກສອນໃຫ້ເຈົ້າຂອງບັດກ່ຽວກັບສະພາບການແກ້ໄຂການສະເໜີກວດສອບ, ຄຳຮຽກຮ້ອງ. ການຈັດການແກ້ໄຂຜົນການກວດສອບ, ຄຳຮຽກຮ້ອງທີ່ເປັນໜ້າທີ່ແກ້ໄຂຂອງອົງການລັດທີ່ມີອຳນາດ.

ໃນກໍລະນີອົງການລັດທີ່ມີອຳນາດແຈ້ງຜົນການແກ້ໄຂວ່າບໍ່ມີສ່ວນກ່ຽວຂ້ອງກັບອາຊະຍາກຳ, ໃນໄລຍະ 15 ວັນລັດຖະການນັບແຕ່ມີບົດສະຫຼຸບຈາກອົງການຈັດຕັ້ງລັດທີ່ມີອຳນາດ, ຊາຄອມແບັງ ລາວ ຈະຕົກລົງກັບເຈົ້າຂອງບັດເຖິງວິທີແກ້ໄຂຕໍ່ກັບຜົນການກວດສອບ, ຮຽກຮ້ອງ.

f. ກໍລະນີ ຊາຄອມແບັງ ລາວ, ເຈົ້າຂອງບັດ ແລະ ບັນດາຝ່າຍທີ່ກ່ຽວຂ້ອງບໍ່ສາມາດຕົກລົງກັນໄດ້ ແລະ/ຫຼື ບໍ່ຍອມຮັບກັບຜົນການແກ້ໄຂຂອງການສະເໜີກວດສອບ, ຄຳຮຽກຮ້ອງຂອງການແກ້ໄຂຂໍ້ຂັດແຍ່ງແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍ.

## 8. ຄ່າທຳນຽມ:

8.1. ຊາຄອມແບັງ ລາວ ມີສິດເກັບຄ່າທຳນຽມ ແລະ ບັນທຶກໜີ້ໃນບັນຊີບັດຂອງເຈົ້າຂອງບັດ ລວມມີຄ່າທຳນຽມ, ດັ່ງນີ້:

a. ຄ່າທຳນຽມອອກບັດໃໝ່: ຈະເກັບໃນເວລາອອກບັດໃໝ່.

b. ຄ່າທຳນຽມອອກບັດດ່ວນ: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງໃຫ້ອອກບັດ ຫລື ປ່ຽນບັດດ່ວນ.

c. ຄ່າທຳນຽມປະຈຳປີ: ເກັບປະຈຳປີສຳລັບທຸກບັດທີ່ນຳໃຊ້ ແລະ ເກັບໃນເດືອນເປີດບັດ.

d. ຄ່າທຳນຽມຖອນເງິນສົດ: ຈະເກັບເວລາຖອນເງິນສົດ.

e. ຄ່າທຳນຽມກວດເບິ່ງຍອດຄົງເຫຼືອໃນບັນຊີ: ຈະເກັບເມື່ອນຳໃຊ້ບັດເພື່ອກວດເບິ່ງຍອດເງິນເຫຼືອໃນບັນຊີບັດ.

f.ຄ່າທຳນຽມປ່ຽນບັດໃໝ່: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງໃຫ້ປ່ຽນບັດກ່ອນມື້ໝົດກຳນົດ.

g. ຄ່າທຳນຽມເຮັດບັດເສຍ ຫຼື ບັດຖືກລັກ: ຈະເກັບເມື່ອເຈົ້າຂອງບັດແຈ້ງໃຫ້ ຊາຄອມແບັງ ລາວ ວ່າເສຍຫາຍ ຫຼື ຖືກລັກ.

h. ຄ່າທຳນຽມອອກລະຫັດບັດໃໝ່: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງໃຫ້ອອກລະຫັດໃຫມ່.

i. ຄ່າທຳນຽມຢັ້ງຢືນທຸລະກຳ: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງໃຫ້ ຊາຄອມແບັງ ລາວ ຢັ້ງຢືນເປັນລາຍລັກອັກສອນຂໍ້ມູນກ່ຽວກັບບັດ, ທຸລະກຳບັດ ຫຼື ບັນຊີບັດ.

j. ຄ່າທຳນຽມສະໜອງທຸລະກຳ: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງສະໜອງເພີ່ມໃບສຳເນົາຂອງໃບບິນສະບັບຕົ້ນ.

k. ຄ່າທຳນຽມຮຽກຮ້ອງກວດສອບບໍ່ຖືກຕ້ອງ: ຈະເກັບເມື່ອຄຳຮຽກຮ້ອງຂອງເຈົ້າຂອງບັດຖືກປະເມີນວ່າບໍ່ຖືກຕ້ອງ ຫລື ບໍ່ຊັດເຈນ.

l. ຄ່າທຳນຽມແລກປ່ຽນເງິນຕາ: ຈະເກັບໃນການແລກປ່ຽນເງິນຕາຕ່າງປະເທດມາເປັນເງິນກີບໂດຍຂຶ້ນກັບສະກຸນເງິນຂອງທຸລະກຳ ແລະ ເວລາດຳເນີນທຸລະກຳ ແລະ ຈະໄດ້ຈົດໜີ້ເຂົ້າບັນຊີບັດ.

m. ຄ່າທຳນຽມພິເສດ: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງກ່ຽວກັບວຽກພິເສດ ຫຼື ເພີ່ມເຕີມໂດຍທີ່ ຊາຄອມແບັງ ລາວ ເຫັນດີປະຕິບັດ.

n. ຄ່າທຳນຽມປ່ຽນແປງຜະລິດຕະພັນ: ຈະເກັບເມື່ອເຈົ້າຂອງບັດຮຽກຮ້ອງໃຫ້ປ່ຽນແປງປະເພດບັດຊຳລະອື່ນ ຫລື ເພີ່ມເຕີມ ຫລື ຫລຸດການບໍລິການໃດອອກ, ປະໂຫຍດ ຫຼື ຈຸດພິເສດຂອງບັດ.

o. ຄ່າທຳນຽມຮຽກຮ້ອງໃຫ້ໂອນເງິນ, ຊຳລະໃບບິນ ແລະ/ຫຼື ຄ່າທຳນຽມໃບບິນແຈ້ງຊຳລະຂັ້ນຕ່ຳໃຫ້ບັດສິນເຊື່ອ ຊາຄອມແບັງ ລາວ: ຈະເກັບເມື່ອນຳໃຊ້ບັດເພື່ອໂອນຜ່ານບັນຊີ, ຊຳລະໃບບິນ ແລະ/ຫຼື ຊຳລະບໍລິການຂັ້ນຕ່ຳໃຫ້ບັດສິນເຊື່ອ ຊາຄອມແບັງ ລາວ.

p. ບັນດາຄ່າທຳນຽມອື່ນຕາມລະບຽບການຂອງ ຊາຄອມແບັງ ລາວ ໃນແຕ່ລະໄລຍະ.

8.2. ລາຍລະອຽດຂອງທຸກປະເພດຄ່າທຳນຽມຖືກກຳນົດໃນຄ່າທຳນຽມຂອງ ຊາຄອມແບັງ ລາວ ນຳໃຊ້ໃຫ້ແກ່ບັດ ແລະ ໄດ້ກາຍເປັນສ່ວນໜຶ່ງທີ່ບໍ່ສາມາດແຍກອອກຈາກຂໍ້ກຳນົດ ແລະ ເງື່ອນໄຂສະບັບນີ້. ເຈົ້າຂອງບັດສາມາດກວດສອບຄ່າທຳນຽມທີ່ນຳໃຊ້ໃນປະຈຸບັນຕາມ website:www.sacombank.com.la ຫຼື ຕາມບັນດາສາຂາ, ໜ່ວຍບໍລິການຂອງ ຊາຄອມແບັງ ລາວ ຫຼື ຕິດຕໍ່ຜ່ານທາງໂທລະສັບໂດຍກົງເຖິງ ຊາຄອມແບັງ ລາວ. ເມື່ອມີການປ່ຽນແປງຄ່າທຳນຽມ, ປະເພດຄ່າທຳນຽມ ແລະ ຮູບແບບການເກັບຄ່າທຳນຽມຕ່າງໆ, ຊາຄອມແບັງ ລາວ ຈະແຈ້ງການເຖິງເຈົ້າຂອງບັດຕາມວິທີການທີ່ກຳນົດໄວ້ໃນມາດຕາ 14 ກ່ອນຢ່າງໜ້ອຍ 30 ມື້ນັບແຕ່ມື້ຄ່າທຳນຽມມີຜົນກຳນົດໃຊ້. ການປ່ຽນແປງຄ່າທຳນຽມຈະມີຄຸນຄ່າ (ຜູກມັດ) ຖ້າເຈົ້າຂອງບັດສືບຕໍ່ນຳໃຊ້ບໍລິການທັນທີເມື່ອຕາຕະລາງຄ່າທຳນຽມໃຫມ່ມີຜົນບັງຄັບໃຊ້ (ມື້ທີ່ຄ່າທຳນຽມໃຫມ່ມີຜົນບັງຄັບໃຊ້).

## 9. ລະງັບບັດຊົ່ວຄາວ, ຢຸດຕິການນຳໃຊ້ບັດ:

ເຈົ້າຂອງບັດສາມາດ ຮຽກຮ້ອງໃຫ້ລະງັບບັດຊົ່ວຄາວ, ຢຸດຕິການນຳໃຊ້ບັດ. ການລະງັບຊົ່ວຄາວມີຜົນນຳໃຊ້ເມື່ອ ຊາຄອມແບັງ ລາວ ໄດ້ຮັບການຮຽກຮ້ອງຈາກເຈົ້າຂອງບັດ. ພ້ອມດຽວກັນນັ້ນ, ຊາຄອມແບັງ ລາວ ຈະສິ້ນສຸດລະງັບບັດຊົ່ວຄາວການນຳໃຊ້ບັດເມື່ອໄດ້ຮັບຄຳຮຽກຮ້ອງສິ້ນສຸດການລະງັບບັດຊົ່ວຄາວຂອງເຈົ້າຂອງບັດ.

9.1. ເຈົ້າຂອງບັດຫຼັກ ມີສິດພຽງຝ່າຍດຽວໃນການຂໍຢຸດຕິການນຳໃຊ້ບັດໂດຍການແຈ້ງການເປັນລາຍລັກອັກສອນໃຫ້ ຊາຄອມແບັງ ລາວ ຮູ້ກ່ອນຢ່າງຕ່ຳ 10 ວັນທຽບກັບມື້ທີ່ຄາດວ່າຈະຢຸດຕິເຊິ່ງໄດ້ລະບຸໃນເອກະສານແຈ້ງການ. ເຈົ້າຂອງບັດຫຼັກມີສິດຝ່າຍດຽວໃນການຂໍຢຸດຕິສິດນຳໃຊ້ບັດຂອງເຈົ້າຂອງບັດເສີມ ແຕ່ເຈົ້າຂອງບັດເສີມບໍ່ມີສິດຮຽກຮ້ອງລະງັບບັດຊົ່ວຄາວ, ຢຸດຕິການນຳໃຊ້ບັດຂອງເຈົ້າຂອງບັດຫຼັກ. ເຈົ້າຂອງບັດຫຼັກສາມາດຂໍຢຸດຕິສິດນຳໃຊ້ບັດຂອງຕົນເຊິ່ງຖືວ່າແມ່ນການສິ້ນສຸດສັນຍາທັງໝົດ. ກໍລະນີ ຊາຄອມແບັງ ລາວ ເປັນຝ່າຍຢຸດຕິການນຳໃຊ້ບັດຕໍ່ກັບເຈົ້າຂອງບັດຍ້ອນ ຊາຄອມແບັງ ລາວ ຕ້ອງປະຕິບັດຕາມການຮຽກຮ້ອງຂອງອົງການລັດທີ່ມີອຳນາດ ຫຼື ຖ້າເຈົ້າຂອງບັດລະເມີດພັນທະໃດ, ສັນຍາໃດກັບ ຊາຄອມແບັງ ລາວ ແມ່ນ ຊາຄອມແບັງ ລາວ ບໍ່ຈຳເປັນຕ້ອງແຈ້ງໃຫ້ເຈົ້າຂອງບັດຮູ້ກ່ອນ. ເມື່ອເຈົ້າຂອງບັດຫຼັກປິດບັນຊີບັດ ສັນຍາສະບັບນີ້ຖືວ່າສິ້ນສຸດຜົນບັງຄັບໃຊ້ ແລະ ບັດສິ້ນສຸດການນຳໃຊ້.

ຫຼັງຈາກການຢຸດຕິການນຳໃຊ້ບັດມີຜົນສັກສິດ:

9.2. a. ເຈົ້າຂອງບັດຈະສືບຕໍ່ຮັບຜິດຊອບຊຳລະທຸກທຸລະກຳ, ຄ່າທຳນຽມ, ຄ່າໃຊ້ຈ່າຍ, ເງິນປັບໃໝ ແລະ ບໍ່ວ່າຈະເປັນການຊົດເຊີຍຄ່າເສຍຫາຍໃດໆ ປະຕິບັດກ່ອນ ຫຼື ຫຼັງການຢຸດຕິການນຳໃຊ້ບັດ (ລວມທັງຄ່າໃຊ້ຈ່າຍ ແລະ ຄ່າທຳນຽມທີ່ຍັງບໍ່ທັນສະແດງໃນບັນຊີບັດ).

b. ທຸກການຊຳລະທີ່ຍັງບໍ່ເຖິງກຳນົດຕາມສັນຍາຈະກາຍເປັນເຖິງກຳນົດ ແລະ ຕ້ອງຊຳລະທັນທີໂດຍທີ່ ຊາຄອມແບັງ ລາວ ບໍ່ຈຳເປັນຕ້ອງແຈ້ງການ ຫຼື ຮຽກຮ້ອງ;

c. ຊາຄອມແບັງ ລາວ ຈະບໍ່ຮັບຜິດຊອບຊົດໃຊ້ຄືນບໍ່ວ່າຄ່າໃຊ້ຈ່າຍໃດໆກັບເຈົ້າຂອງບັດຕາມລະບຽບການ ຫລື ກ່ຽວຂ້ອງກັບສັນຍາ;ແລະ

d. ຜົນສັກສິດຂອງສັນຍາ, ບັນດາຂໍ້ກຳນົດ ແລະ ເງື່ອນໄຂຂອງມັນຈະສືບຕໍ່ມີຜົນສັກສິດຈົນເຖິງເວລາທີ່ເຈົ້າຂອງບັດປະຕິບັດສຳເລັດ ແລະ ຄົບຖ້ວນທຸກພັນທະທາງການເງິນກັບຊາຄອມແບັງ ລາວ.

9.3. ຫລັງຈາກຢຸດຕິການນຳໃຊ້ບັດ ແລະ ເຈົ້າຂອງບັດໄດ້ສຳເລັດການຊຳລະທຸກພັນທະການເງິນຕໍ່ກັບ ຊາຄອມແບັງ ລາວ ແຕ່ບັນຊີບັດຍັງຄົງມີຍອດເຫຼືອ ແລະ ເຈົ້າຂອງບັດບໍ່ມາຮັບຄືນ ຊາຄອມແບັງ ລາວ ມີສິດເກັບຄ່າທຳນຽມຄຸ້ມຄອງຕໍ່ກັບຈຳນວນເງິນນັ້ນຕາມລະບຽບການຂອງ ຊາຄອມແບັງ ລາວ ໃນແຕ່ລະໄລຍະ.

## 10. ບັນດາກໍລະນີປະຕິເສດການຊຳລະດ້ວຍບັດ, ລະງັບບັດຊົ່ວຄາວ ແລະ ເກັບມ້ຽນບັດ:

ຊາຄອມແບັງ ລາວ/ຝ່າຍຮັບຊຳລະດ້ວຍບັດມີສິດປະຕິເສດການຮັບຊຳລະດ້ວຍບັດ, ລະງັບບັດຊົ່ວຄາວ ແລະ ເກັບມ້ຽນບັດໃນບັນດາກໍລະນີດັ່ງນີ້:

10.1. ທຸລະກຳບັດບໍ່ແມ່ນເຈົ້າຂອງບັດເປັນຜູ້ປະຕິບັດ;

10.2. ບັດປອມ;

10.3. ພົບເຫັນວ່າທຸລະກຳນັ້ນມີເນື້ອໃນທີ່ຂັດກັບລະບຽບກົດຫມາຍ ຫຼື ຂັດກັບຂໍ້ກຳນົດການນຳໃຊ້ບັດ;

10.4. ບັດຖືກນຳໃຊ້ເຂົ້າໃນການເຮັດທຸລະກຳທີ່ຖືກຫ້າມ: ບັນດາທຸລະກຳທີ່ມີເປົ້າຫມາຍໃນການຟອກເງິນ, ສະຫນັບສະໜູນອາຊະຍາກຳ, ຫຼອກລວງ, ຂີ້ລັກ ແລະ ບັນດາການກະທຳທີ່ຜິດກົດໝາຍອື່ນ; ທຸລະກຳທີ່ມີລັກສະນະຂີ້ລັກປອມແປງ; ທຸລະກຳທີ່ບໍ່ມີຕົວຕົນຢູ່ນຳຝ່າຍຮັບຊຳລະດ້ວຍບັດ (ບໍ່ເກີດມີການຊື້ຂາຍສິນຄ້າ ແລະ ໃຫ້ບໍລິການຈິງ);

10.5. ຮັບໃຊ້ການສອບສວນ, ຈັດການແກ້ໄຂອາຊະຍາກຳຕາມລະບຽບກົດຫມາຍ;

10.6. ເຈົ້າຂອງບັດບໍ່ເຊັນ ແລະ/ຫຼື ຂຽນຊື່ໃນບັດ;

10.7. ບັດໄດ້ຖືກເຈົ້າຂອງບັດແຈ້ງວ່າບັດເສຍ;

10.8. ບັດໝົດອາຍຸການນຳໃຊ້;

10.9. ບັດຖືກລະງັບ;

10.10. ບັນດາກໍລະນີອື່ນຕາມລະບຽບການຂອງ ຊາຄອມແບັງ ລາວ ແລະ/ຫຼື ລະບຽບກົດຫມາຍ.

## 11. ໝົດອາຍຸການນຳໃຊ້, ຍົກເລີກ ແລະ ລະງັບການນຳໃຊ້ບັດ:

11.1. ບັດຈະໝົດອາຍຸການນຳໃຊ້ໃນມື້ສຸດທ້າຍຂອງເດືອນທີ່ໝົດອາຍຸທີ່ໄດ້ລະບຸເທິງບັດ. ເຈົ້າຂອງບັດບໍ່ສາມາດນຳໃຊ້ບັດໄດ້ເມື່ອບັດໝົດອາຍຸການນຳໃຊ້.

11.2. ຊາຄອມແບັງ ລາວ ມີສິດທຳລາຍ, ລະງັບການນຳໃຊ້ບັດ ແລະ ຍົກເລີກບັນດາຂໍ້ກຳນົດ ແລະ ເງື່ອນໄຂນຳໃຊ້ທັນທີຖ້າບັດເສຍ, ເປເພ, ນຳໃຊ້ບໍ່ຖືກເປົ້າຫມາຍ, ບັດບໍ່ເຫຼືອຍອດຄ້າງ, ເມື່ອເຈົ້າຂອງບັດບໍ່ສາມາດຊຳລະບັນດາຄ່າໃຊ້ຈ່າຍ, ເມື່ອເຈົ້າຂອງບັດລະເມີດບັນດາຂໍ້ກຳນົດ ແລະ ເງື່ອນໄຂຫຼືເມື່ອ ຊາຄອມແບັງ ລາວ ຢຸດຕິຈັດການບັນດາການຊຳລະທີ່ກ່ຽວຂ້ອງກັບບັດເມື່ອມີການຮຽກຮ້ອງຈາກອົງການທີ່ມີສິດອຳນາດ ແລະ/ຫຼື ຕາມລະບຽບກົດຫມາຍ.

11.3. ລູກຄ້າ ຫຼື ຊາຄອມແບັງ ລາວ ສາມາດຍົກເລີກບັດໃນເວລາຊຳລະເມື່ອເກີດມີຂໍ້ຜິດພາດກ່ຽວກັບຂໍ້ມູນຕ່າງໆທີ່ໄດ້ຈົດບັນທຶກໃນບັດ. ໃນກໍລະນີນີ້ ຊາຄອມແບັງ ລາວ ສາມາດສະໜອງບັດໃຫມ່ໃຫ້ລູກຄ້າ.

## 12. ບັດເສຍ, ເປ່ເພ ຍ້ອນຄວາມຜິດພາດທາງດ້ານເຕັກນິກ ແລະ ຂໍ້ມູນຮົ່ວໄຫລ

12.1. ໃນກໍລະນີບັດເສຍ ຫຼື ສົງໃສວ່າຂໍ້ມູນບັດຮົ່ວໄຫລ, ເຈົ້າຂອງບັດຕ້ອງແຈ້ງໃຫ້ ຊາຄອມແບັງ ລາວ ທັນທີ ແລະ ມີການຢັ້ງຢືນທີ່ເປັນລາຍລັກອັກສອນໃຫ້ ຊາຄອມແບັງ ລາວ ພາຍໃນເວລາ 24 ຊົ່ວໂມງ.

12.2. ເມື່ອໄດ້ຮັບແຈ້ງການຈາກເຈົ້າຂອງບັດ, ຊາຄອມແບັງ ລາວ ຈະດຳເນີນການລະງັບບັດທັນທີ ແລະ ປະສານງານກັບບັນດາຝ່າຍທີ່ກ່ຽວຂ້ອງເພື່ອດຳເນີນການທີ່ຈຳເປັນເພື່ອສະກັດກັ້ນບັນດາຄວາມເສຍຫາຍທີ່ຈະເກີດຂຶ້ນ, ພ້ອມດຽວກັນນັ້ນກໍ່ຈະແຈ້ງການຄືນໃຫ້ເຈົ້າຂອງບັດ. ໄລຍະເວລາ ຊາຄອມແບັງ ລາວ ສຳເລັດການສົ່ງແຈ້ງການໃຫ້ເຈົ້າຂອງບັດບໍ່ເກີນ 5 ວັນລັດຖະການຕໍ່ກັບບັດມີ BIN ໂດຍທະນາຄານກາງອອກໃຫ້ ຫຼື 10 ວັນລັດຖະການຕໍ່ກັບບັດມີ BIN ໂດຍອົງການຊຳລະສາກົນອອກໃຫ້ນັບແຕ່ມື້ໄດ້ຮັບແຈ້ງການຂອງເຈົ້າຂອງບັດ. ເຈົ້າຂອງບັດຈະສືບຕໍ່ຮັບຜິດຊອບໃຫ້ທຸກທຸລະກຳບັດ, ເຖິງແມ່ນຈະໄດ້ຮັບການອະນຸຍາດຈາກເຈົ້າຂອງບັດຫຼືບໍ່, ໄດ້ດຳເນີນການກ່ອນແຈ້ງການໃຫ້ ຊາຄອມແບັງ ລາວ ແລະ ໄດ້ຮັບການຢັ້ງຢືນໂດຍ ຊາຄອມແບັງ ລາວ. ເຈົ້າຂອງບັດຕ້ອງຮັບຜິດຊອບຄວາມເສຍຫາຍທີ່ເກີດຂຶ້ນຈາກບັດເສຍ ຫຼື ຖືກສົງໃສວ່າຂໍ້ມູນບັດຮົ່ວໄຫຼບໍ່ວ່າຈະດ້ວຍເຫດຜົນໃດກໍ່ຕາມ.

12.3. ຖ້າເຈົ້າຂອງບັດພົບເຫັນບັດເຊິ່ງກ່ອນຫນ້ານີ້ໄດ້ແຈ້ງວ່າບັດເສຍ ເຈົ້າຂອງບັດຫ້າມສືບຕໍ່ນຳໃຊ້ບັດ ຫຼື ໃຫ້ຜູ້ອື່ນນຳໃຊ້ ແລະ ບໍ່ວ່າກໍລະນີໃດ, ບັດໃບນັ້ນກໍ່ຕ້ອງໃຫ້ເຈົ້າຂອງບັດຕັດເຄິ່ງ ຫຼື ມອບບັດຄືນໃຫ້ ຊາຄອມແບັງ ລາວ ເພື່ອທຳລາຍ.

12.4. ເຈົ້າຂອງບັດຕ້ອງຊົດໃຊ້ໃຫ້ ຊາຄອມແບັງ ລາວ ເຖິງຄວາມເສຍຫາຍ ຫຼື ຄວາມເສຍຫາຍໃດໆທີ່ເກີດຈາກການເປີດ ແລະ ນຳໃຊ້ບັດ ຫລື PIN ທີ່ ຊາຄອມແບັງ ລາວ ຕ້ອງຮັບຜິດຊອບ.

12.5. ກໍລະນີບັດເປ່ເພຍ້ອນຄວາມຜິດພາດທາງດ້ານເຕັກນິກ, ຊາຄອມແບັງ ລາວ ຈະປ່ຽນບັດ ຫລື ອອກບັດໃຫມ່ໃຫ້ລູກຄ້າໂດຍບໍ່ເສຍຄ່າໃຊ້ຈ່າຍ.

12.6. ກໍລະນີບັດຖືກສວຍໃຊ້, ເກີດຄວາມເສຍຫາຍ, ຊາຄອມແບັງ ລາວ ແລະ ເຈົ້າຂອງບັດຈະຕ້ອງເຈລະຈາຮ່ວມກັນໃນການແບ່ງຄວາມຮັບຜິດຊອບ ແລະ ຫາວິທີແກ້ໄຂຜົນກະທົບຮ່ວມກັນ. ກໍລະນີທັງສອງຝ່າຍບໍ່ສາມາດຕົກລົງກັນໄດ້, ການແກ້ໄຂຈະຖືກດຳເນີນຕາມຂະບວນການຂອງກົດໝາຍ.

12.7. ກໍລະນີເຈົ້າຂອງບັດເຮັດບັດເສຍ ຫຼື ເປ່ເພ, ຮ້ອງຂໍໃຫ້ອອກບັດໃຫມ່ ແມ່ນເຈົ້າຂອງບັດຕ້ອງຈ່າຍຄ່າທຳນຽມປ່ຽນບັດໃໝ່ຕາມລະບຽບການຂອງ ຊາຄອມແບັງ ລາວ ໃນແຕ່ລະໄລຍະ.

## 13. ຄວາມຖືກຕ້ອງຂອງເອກະສານ:

ຊາຄອມແບັງ ລາວ ສາມາດອີງໃສ່:

a. ເອກະສານທຸລະກຳຕ່າງໆທີ່ກ່ຽວຂ້ອງກັບທຸລະກຳບັດ, ຮຽກຮ້ອງ ແລະ/ຫລື ແນະນຳທີ່ໄດ້ເຊັນໂດຍເຈົ້າຂອງບັດ;

b. ທຸກທຸລະກຳໃດໆທີ່ນຳໃຊ້ລະຫັດ PIN ແລະ/ຫລື OTP ຂອງເຈົ້າຂອງບັດ;

c. ຫຼື ຂໍ້ມູນໃດໆທີ່ ຊາຄອມແບັງ ລາວ ມີ, ລວມເຖິງຄຳສັ່ງໂດຍຄຳເວົ້າ ຫລື ເອເລັກໂຕນິກ, ກ່ຽວຂ້ອງກັບເຈົ້າຂອງບັດ, ບັນຊີບັດ ຫຼື ການນຳໃຊ້ບັດ ແມ່ນຫຼັກຖານຢັ້ງຢືນຄວາມຖືກຕ້ອງກ່ຽວກັບທຸລະກຳບັດ, ຮຽກຮ້ອງ ແລະ/ຫຼື ຄຳສັ່ງທີໄດ້ປະຕິບັດໂດຍເຈົ້າຂອງບັດ.

## 14. ແຈ້ງການ:

14.1 ທຸກແຈ້ງການຂອງ ຊາຄອມແບັງ ລາວ ເຖິງເຈົ້າຂອງບັດຈະຖືກ ຊາຄອມແບັງ ລາວ ສົ່ງເຖິງເຈົ້າຂອງບັດໂດຍສົ່ງຕາມທີ່ຢູ່ທີ່ເຈົ້າຂອງບັດລົງທະບຽນນຳ ຊາຄອມແບັງ ລາວ ຫຼື ຕາມການແຈ້ງການເທິງ Website ທາງການຂອງ ຊາຄອມແບັງ ລາວ ຫຼື ປະກາດແຈ້ງການຜ່ານສື່ມວນຊົນ ຫລື ຕິດຢູ່ຫນ້າກະດານຢູ່ຕາມບັນດາສາຂາ/ຫນ່ວຍບໍລິການຂອງ ຊາຄອມແບັງ ລາວ. ທຸກແຈ້ງການຈະຖືວ່າເຈົ້າຂອງບັດໄດ້ຮັບຮູ້ແລ້ວດັ່ງນີ້:

a. ພາຍໃນເວລາ 5 ມື້ນັບແຕ່ມື້ສົ່ງ ຖ້າສົ່ງໂດຍຈົດຫມາຍ (ນັບແຕ່ມີກາຈ້ຳສົ່ງຈາກຫ້ອງການໄປສະນີ); ຫລື

b. ໃນມື້ສົ່ງໄປຖ້າສົ່ງດ້ວຍ Fax, Telex, E-mail ທີ່ເຈົ້າຂອງບັດລົງທະບຽນກັບ ຊາຄອມແບັງ ລາວ; ຫຼື

c. ໃນມື້ປະກາດເທິງ Website ທາງການຂອງ ຊາຄອມແບັງ ລາວ ຫຼື ປະກາດຕາມສື່ມວນຊົນ ຫລື ຕິດຢູ່ຫນ້າກະດານຢູ່ຕາມຈຸດບໍລິການທົ່ວລະບົບ ຊາຄອມແບັງ ລາວ.

14.2. ເຈົ້າຂອງບັດສາມາດຕິດຕໍ່ ຊາຄອມແບັງ ລາວ ຜ່ານເບີໂທລະສັບ +856.21.264.222 ຫຼື ເບີ Whatsapp 020.28023244 ເພື່ອຈະໄດ້ຮັບຄຳປຶກສາ, ແກ້ໄຂຂໍ້ຂ້ອງໃຈ ເຖິງບັນດາຜະລິດຕະພັນ ຫຼື ບໍລິການ (ທີ່ກ່ຽວຂ້ອງກັບບັດ) ໂດຍ ຊາຄອມແບັງ ລາວ ໃຫ້ບໍລິການຍົກເວັ້ນຄຳຮຽກຮ້ອງທີ່ນອກເໜືອຄວາມສາມາດຂອງ ຊາຄອມແບັງ ລາວ (ຕົວຢ່າງ: ຄວາມຜິດພາດໃນການເຮັດທຸລະກຳທີ່ເກີດຈາກເຈົ້າຂອງບັດເກີດຄວາມຜິດພາດ, ຄວາມຜິດຂອງຝ່າຍທີສາມ ຫລື ຄຳຮຽກຮ້ອງທີ່ບໍ່ສົມເຫດສົມຜົນອື່ນໆຂອງເຈົ້າຂອງບັດ).

## 15. ເຫດສຸດວິໄສ:

ເຫດສຸດວິໄສລວມມີບັນດາເຫດການທີ່ເກີດຂຶ້ນໂດຍບໍ່ຮູ້ລ່ວງໜ້າ ແລະ ນອກເໜືອການຄວບຄຸມຂອງແຕ່ລະຝ່າຍລວມມີ: ໄພທຳມະຊາດ; ສົງຄາມ; ໄຟຟ້າຂັດຂ້ອງ, ຄວາມເປ່ເພ/ຄວາມຜິດພາດຂອງ ATM, POS ຫຼື ເຄື່ອງຈັກ, ອຸປະກອນຕ່າງໆເພື່ອຮັບໃຊ້ໃຫ້ວຽກງານບັດ ຫຼື ລະບົບຈັດການຂໍ້ມູນ ຫລື ລະບົບສື່ສານ/Internet ຫລື ບໍລິການແລກປ່ຽນຂໍ້ມູນ ແລະ ນອກເໜືອບັນດາເຫດການທີ່ກ່າວມາ; ຕາມຄຳຮຽກຮ້ອງຂອງອົງການຈັດຕັ້ງພາກລັດທີ່ມີສິດອຳນາດ; ການປ່ຽນແປງທາງກົດໝາຍ; ບັນດາເຫດການອື່ນນອກເໜືອການຄວບຄຸມຂອງແຕ່ລະຝ່າຍ.

ເມື່ອເກີດມີເຫດການສຸດວິໄສ, ສອງຝ່າຍຈະລະງັບການປະຕິບັດຕາມສັນຍາຊົ່ວຄາວ, ຊາຄອມແບັງ ລາວ ຈະເຮັດແຈ້ງການໃຫ້ເຈົ້າຂອງບັດໂດຍວິທີໃດຫນຶ່ງທີ່ໄດ້ກຳນົດໃນມາດຕາ 14 ຂອງສັນຍາສະບັບນີ້ ແລະ ຈະບໍ່ເກີດມີພັນທະຮັບຜິດຊອບໃນການທົດແທນຕໍ່ກັບເຈົ້າຂອງບັດ, ຝ່າຍທີສາມ. ເມື່ອສິ້ນສຸດບັນດາເຫດສຸດວິໄສ, ແຕ່ລະຝ່າຍຈະສືບຕໍ່ປະຕິບັດພັນທະໃຫ້ບໍລິການຕາມສັນຍາ.

## 16. ຂໍ້ກຳນົດອື່ນ:

16.1. ຊາຄອມແບັງ ລາວ ມີສິດປ່ຽນແປງ, ເພີ່ມຕື່ມເນື້ອໃນຂໍ້ກຳນົດ ແລະ ເງື່ອນໄຂ, ປ່ຽນແປງມື້ຫມົດກຳນົດ ແລະ/ຫຼື ບັນດາລາຍລະອຽດອື່ນຂອງບັດທີ່ໄດ້ອອກ, ປ່ຽນແທນບັດໄດ້ຕະຫຼອດເວລາ, ໂດຍຈະແຈ້ງການກ່ອນມີຜົນນຳໃຊ້ໃຫ້ເຈົ້າຂອງບັດຕາມຮູບການທີ່ໄດ້ລະບຸໃນມາດຕາ 14 ຂອງສັນຍາສະບັບນີ້. ການປ່ຽນແປງນີ້ມີຜົນສັກສິດນຳໃຊ້ເມື່ອ ຊາຄອມແບັງ ລາວ ດຳເນີນການແຈ້ງການໃຫ້ເຈົ້າຂອງບັດຮູ້ ຢ່າງຕ່ຳ 30 ມື້ກ່ອນມີຜົນສັກສິດນຳໃຊ້.

ຕາມການຊັ່ງຊາຢ່າງຖີ່ຖ້ວນ, ບໍ່ວ່າເວລາໃດ ຫຼື ເຫດຜົນໃດກໍ່ຕາມທີ່ ຊາຄອມແບັງ ລາວ ເຫັນວ່າເຫມາະສົມ, ທະນາຄານສາມາດປ່ຽນແປງ, ປ່ຽນແທນ ຫຼື ເພີ່ມເຕີມຂໍ້ກຳນົດ ແລະ ເງື່ອນໄຂນີ້. ການປ່ຽນແປງ, ເພີ່ມເຕີມ ຫຼື ປ່ຽນແທນນີ້ມີຜົນສັກສິດເມື່ອ ຊາຄອມແບັງ ລາວ ຈະດຳເນີນແຈ້ງການໃຫ້ເຈົ້າຂອງບັດກ່ອນທີ່ເນື້ອໃນມີການປ່ຽນແປງ, ເພີ່ມເຕີມ ຫຼື ປ່ຽນແທນນີ້ມີຜົນສັກສິດໂດຍຜ່ານບັນດາຊ່ອງທາງ (ລວມເຖິງ ບໍ່ມີຂອບເຂດ): ສົ່ງຈົດຫມາຍ (ຫລື E mail) ຕາມທີ່ຢູ່ທີ່ເຈົ້າຂອງບັດສະໜອງໃຫ້, ແຈ້ງການຕາມສື່ມວນຊົນ, ເທິງ Website ຂອງ ຊາຄອມແບັງ ລາວ, ຫລື ຕິດຢູ່ຫນ້າກະດານຢູ່ບັນດາ ສາຂາ/ ຫນ່ວຍບໍລິການ ຫຼື ຮູບການໃດກໍ່ຕາມໂດຍ ຊາຄອມແບັງ ລາວ ຕົກລົງໃນໄລຍະເວລາທີ່ລະບຸໃນແຈ້ງການຂ້າງເທິງ, ເຈົ້າຂອງບັດມີສິດສະແດງຄວາມບໍ່ເຫັນດີນຳບັນດາເນື້ອໃນທີ່ໄດ້ຮັບການປ່ຽນແປງ, ເພີ່ມເຕີມ, ປ່ຽນແປງໂດຍການຢຸດຕິການນຳໃຊ້ບັດຕາມຂໍ້ກຳນົດໃນມາດຕາ 9 ຂອງຂໍ້ກຳນົດ ແລະ ເງື່ອນໄຂໃນສັນຍາສະບັບນີ້. ຖ້າເຈົ້າຂອງບັດຫຼັກບໍ່ໄດ້ຮຽກຮ້ອງໃຫ້ຢຸດຕິການນຳໃຊ້ບັດໃນເວລາຂ້າງເທິງ, ບັນດາເນື້ອໃນ ປ່ຽນແປງ, ເພີ່ມເຕີມ, ປ່ຽນແທນຈະມີຜົນສັກສິດນຳໃຊ້ນັບແຕ່ມື້ມີຜົນບັງຄັບໃຊ້ທີ່ ຊາຄອມແບັງ ລາວ ໄດ້ແຈ້ງການ.

16.2. ເຈົ້າຂອງບັດ ແມ່ນເຈົ້າຂອງບັດຫຼັກ ແລະ ບັນດາບັດເສີມທັງຫມົດມີພາລະຮັບຜິດຊອບຮ່ວມກັນເຖິງບັນດາພັນທະຂອງຕົນຕາມກຳນົດໃນສັນຍາ. ບໍ່ວ່າການແຈ້ງການໃດເຖິງເຈົ້າຂອງບັດໃດຫນຶ່ງກໍ່ຕາມຈະຖືວ່າໄດ້ແຈ້ງການໃຫ້ທຸກໆເຈົ້າຂອງບັດຮັບຮູ້ແລ້ວ.

16.3. ຮັບປະກັນຄວາມປອດໄພ, ຮັກສາຄວາມລັບໃນການນຳໃຊ້ບັດ:

a. ຊາຄອມແບັງ ລາວ (ຫຼື ສົມທົບກັບບັນດາອົງການຈັດຕັ້ງຊຳລະບັດ, ອົງການຈັດຕັ້ງ Switch ບັດ, ອົງການຫັກບັນຊີອີເລັກໂຕນິກ) ຈະດຳເນີນບັນດາວິທີການຮັບປະກັນຄວາມປອດໄພ, ສະກັດກັ້ນປ້ອງກັນຄວາມສ່ຽງຂອງທຸລະກຳບັດຕາມຫຼັກການຄຸ້ມຄອງຄວາມສ່ຽງໃນວຽກງານທະນາຄານອີເລັກໂຕນິກ; ຮັກສາຂໍ້ມູນທີ່ກ່ຽວຂ້ອງເຖິງວຽກງານບັດ; ຮັບປະກັນລະບົບໂຄງຮ່າງພື້ນຖານ, ເຕັກນິກບໍລິການຄຸ້ມຄອງວຽກງານອອກບັດ, ໃຫ້ການຊຳລະດ້ວຍບັດດຳເນີນໄປຢ່າງສະດວກ ແລະ ປອດໄພ.

b. ຊາຄອມແບັງ ລາວ ຈະສ້າງ, ບໍລິການສາຍດ່ວນຕະຫລອດ 24 ຊົ່ວໂມງໃນ 7 ວັນເພື່ອຮັບຄຳຮຽກຮ້ອງ, ແກ້ໄຂບັນດາບັນຫາຕ່າງໆຂອງເຈົ້າຂອງບັດໃຫ້ທັນເວລາ;

c. ເມື່ອເຈົ້າຂອງບັດມີຄວາມຕ້ອງການ, ຊາຄອມແບັງ ລາວ ຈະແນະນຳໃຫ້ລູກຄ້າເຖິງການບໍລິການບັດ, ວິທີການນຳໃຊ້ບັດທີ່ຖືກຕ້ອງຕາມຂັ້ນຕອນ, ບັນດາຄວາມສ່ຽງທີ່ອາດເກີດຂຶ້ນເມື່ອນຳໃຊ້ບັດ ແລະ ການແກ້ໄຂເມື່ອພົບບັນຫາ;

d. ຊາຄອມແບັງ ລາວ ຈະດຳເນີນການໃຫ້ຂໍ້ມູນບັນດາບັດທີ່ມີລັກສະນະຂີ້ລັກ, ປອມແປງໃຫ້ອົງການຈັດຕັ້ງທີ່ມີຫນ້າທີ່ກວດສອບອາຊະຍາກຳບັດ; ກວດກາ, ກວດສອບ ຫລື ປະສານງານກັບອົງການທີ່ມີພາລະບົດບາດທີ່ກ່ຽວຂ້ອງໃນການອັບເດດລາຍຊື່ບັດທີ່ຈະຕ້ອງປະຕິເສດຊຳລະ ຫລື ມີລັກສະນະປອມແປງໃຫ້ອົງການຊຳລະບັດ ແລະ ຈຸດບໍລິການທີ່ຮັບຊຳລະດ້ວຍບັດ; ປະສານງານກັບອົງການທີ່ມີພາລະບົດບາດ ແລະ ບັນດາຝ່າຍທີ່ກ່ຽວຂ້ອງໃນການສະກັດກັ້ນ, ປ້ອງກັນອາຊະຍາກຳທີ່ກ່ຽວຂ້ອງກັບທຸລະກຳບັດ ແລະ ການກວດກາແກ້ໄຂເມື່ອພົບເຫັນອາຊະຍາກຳທີ່ນຳໃຊ້ບັດຕາມລະບຽບກົດຫມາຍ;

e. ຊາຄອມແບັງ ລາວ ຈະພິຈາລະນາ, ກວດກາເອກະສານ, ຕິດຕາມເພື່ອຮັບປະກັນການຊຳລະໂອນເງິນດ້ວຍບັດອອກຕ່າງປະເທດໃຫ້ຖືກຕາມຈຸດປະສົງ, ວົງເງິນນຳໃຊ້ບັດ ແລະ ເໝາະສົມກັບລະບຽບກົດຫມາຍຄຸ້ມຄອງເງິນຕາ.

f. ເຈົ້າຂອງບັດຕ້ອງຮັກສາບັດ, ຮັກສາລະຫັດ PIN, ບັນດາລະຫັດທີ່ໃຊ້ເພື່ອຢັ້ງຢືນວ່າເປັນເຈົ້າຂອງບັດ, ບັນດາຂໍ້ມູນບັດ, ຂໍ້ມູນທຸລະກຳ, ບໍ່ເປີດເຜີຍຂໍ້ມູນບັດ, ແຈ້ງການ ແລະ ປະສານງານກັບ ຊາຄອມແບັງ ລາວ ເພື່ອຈັດການກັບເຫດການເຊັ່ນ: ບັດເສຍ ຫລື ມີຄວາມຕ້ອງໃນການກວດສອບ, ຮຽກຮ້ອງ. ທຸກການນຳໃຊ້ບັດກັບ PIN ແລະ/ຫລື OTP ເຖິງວ່າຈະດຳເນີນໂດຍເຈົ້າຂອງບັດ ແລະ/ຫລື ຜູ້ໃດກໍ່ຕາມຈະຖືວ່າແມ່ນເຈົ້າຂອງບັດນຳໃຊ້/ປະຕິບັດ ແລະ ເຈົ້າຂອງບັດມີຫນ້າທີ່ຮັບຜິດຊອບບັນດາພັນທະ ຫຼື ຮັບຜິດຊອບຕໍ່ຜົນສະທ້ອນທັງໝົດທີ່ເກີດຂຶ້ນຈາກທຸລະກຳນັ້ນ.

16.4. ເມື່ອ ຊາຄອມແບັງ ລາວ ມອບໂອນ ຫລື ມອບສິດສ່ວນໃດຫນຶ່ງຫລືທັງຫມົດ ແລະ/ຫຼື ພັນທະຂອງຕົນຕາມສັນຍາແມ່ນຕ້ອງປະຕິບັດໃຫ້ເຫມາະສົມກັບລະບຽບກົດຫມາຍ.

16.5. ເຈົ້າຂອງບັດບໍ່ມອບສິດມອບໂອນ ຫລື ມອບສິດທັງຫມົດຫລືສ່ວນໃດຫນຶ່ງ ແລະ/ຫລື ພັນທະຂອງຕົນຕາມສັນຍາໃຫ້ຝ່າຍທີ 3. ກໍລະນີເຈົ້າຂອງບັດມອບໂອນ, ມອບສິດສ່ວນໃດຫນຶ່ງຫລືທັງຫມົດ ແລະ/ຫລື ພັນທະຂອງຕົນຕາມສັນຍາຂອງຝ່າຍທີ 3, ເຈົ້າຂອງບັດຕ້ອງຮັບຜິດຊອບທັງຫມົດຕໍ່ການນຳໃຊ້ບັດຂອງຝ່າຍທີ່ 3.

16.6. ຂໍ້ກຳນົດ, ເງື່ອນໄຂ ແລະ ສັນຍາຖືກດັດແກ້ຕາມກົດໝາຍປະຈຸບັນຂອງ ສ.ປ.ປ ລາວ. ໃນກໍລະນີເກີດຄວາມຂັດແຍ່ງຈາກ ຫລື ກ່ຽວຂ້ອງກັບສັນຍາ ແລະ/ຫລື ຂໍ້ກຳນົດ ແລະ ເງື່ອນໄຂທີ່ບໍ່ສາມາດແກ້ໄຂໄດ້ໂດຍການເຈລະຈາ, ດ້ວຍວິທີການປອງດອງແມ່ນຈະໄດ້ມອບໃຫ້ສານທີ່ມີອຳນາດໃນ ສ.ປ.ປ ລາວ ເປັນຜູ້ດຳເນີນການແກ້ໄຂ.